ເກັບທຸລະ

ກະຊວງສຶກສາທິການ ແລະ ກິລາ
ຂາເຂົ້າ ເລກທີ 7058
ວັນທີ 28.12.21

5

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 681 /ລບ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2021

# ດຳລັດ
# ວ່າດ້ວຍ ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 30/ສພຊ, ລົງວັນທີ 19 ກໍລະກົດ 2013;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1158/ສສກ, ລົງວັນທີ 30 ພະຈິກ 2021.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງ, ການຕິດຕາມ ກວດກາ ແລະ ປະເມີນຜົນ ການເຄື່ອນໄຫວ ແລະ ການນຳໃຊ້ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນດັ່ງກ່າວ ມີປະສິດທິພາບ ແລະ ມີປະສິດທິຜົນສູງ ແນໃສ່ຮັບປະກັນ ໃຫ້ມີແຫຼ່ງທຶນທີ່ໝັ້ນຄົງສຳລັບຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ

ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ຂຽນຫຍໍ້ດ້ວຍຕົວອັກສອນ " ກພວຕ" ແມ່ນການຈັດຕັ້ງໜຶ່ງຂອງລັດ ສ້າງຕັ້ງຂຶ້ນເພື່ອລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ແນໃສ່ສະສົມທຶນ ເພື່ອຕອບສະໜອງ ເຂົ້າໃນການຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ມີປະສິດທິຜົນ ແລະ ຍືນຍົງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຄົ້ນຄວ້າ ແລະ ພັດທະນາ** ໝາຍເຖິງ ການຄົ້ນຄວ້າປັບປຸງຄວາມຮູ້ວິທະຍາສາດ ແລະ ການພັດທະນາ ເຕັກໂນໂລຊີເດີມ ໃຫ້ເປັນຄວາມຮູ້ໃໝ່, ວິທີການໃໝ່, ເຕັກໂນໂລຊີໃໝ່ ຢ່າງເປັນລະບົບ ເພື່ອໝູນໃຊ້ໃນການອອກແບບ ແລະ ຜະລິດຕະພັນໃໝ່ ຮັບໃຊ້ສັງຄົມ;

2. **ການບໍລິການວິທະຍາສາດ ແລະ ເຕັກໂນໂລຊີ** ໝາຍເຖິງ ບັນດາການເຄື່ອນໄຫວບໍລິການທາງດ້ານຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ, ການສະໜອງຄວາມຮູ້, ໃຫ້ຄຳປຶກສາດ້ານເຕັກນິກ, ວິທີການ, ສ້າງບຳລຸງ, ຍົກລະດັບ, ເຜີຍແຜ່ຂໍ້ມູນຂ່າວສານ ທາງດ້ານຜົນການຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ;

3. **ການຄຸ້ມຄອງບໍລິຫານ** ໝາຍເຖິງ ການດຳເນີນການບໍລິຫານຈັດການ ແລະ ການຄຸ້ມຄອງບັນດາການເຄື່ອນໄຫວ ຂອງກອງທຶນ ຕາມແຜນການ, ແຜນງານ ແລະ ວຽກງານ ທີ່ຖືກຮັບຮອງ ຈາກສະພາບໍລິຫານກອງທຶນ;

4. **ໂຄງການຄົ້ນຄວ້າ** ໝາຍເຖິງ ການຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ນຳໃຊ້ກອງທຶນ ຊຶ່ງມີການກຳນົດ ຈຸດປະສົງ, ເປົ້າໝາຍ, ຄາດຄະເນຜົນໄດ້ຮັບ, ເວລາເລີ່ມຕົ້ນ ແລະ ສິ້ນສຸດການຈັດຕັ້ງປະຕິບັດ.

5. **ຄ່າທຳນຽມ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ** ໝາຍເຖິງ ການເກັບຄ່າສິດຄຸ້ມຄອງບໍລິຫານຂອງກອງທຶນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງຕ່າງໆ ທີ່ເຄື່ອນໄຫວວຽກງານທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ໂດຍຜ່ານຂະແໜງການຂອງກອງທຶນ ດ້ວຍຮູບການອອກໃບຢັ້ງຢືນ ແລະ ໃບອະນຸຍາດຕ່າງໆ.

6. **ຄ່າບໍລິການວິຊາການ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ** ໝາຍເຖິງ ການບໍລິການ ຜົນການຄົ້ນຄວ້າ ທີ່ນຳໃຊ້ກອງທຶນ ແລະ ການບໍລິການທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ແຜນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ແຜນຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
2. ຮັບປະກັນການເຄື່ອນໄຫວ ຢ່າງມີ ປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ;
3. ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ, ຈະແຈ້ງ ແລະ ສາມາດກວດສອບໄດ້;
4. ຮັບປະກັນການຕິດຕາມ, ກວດກາ ປະເມີນຜົນ ຢ່າງເປັນປົກກະຕິ ແລະ ຄຸ້ມຄອງ ຢ່າງລວມສູນ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

**ມາດຕາ 6 ແຫຼ່ງລາຍຮັບ**

ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ໜຶ່ງສ່ວນຮ້ອຍ ຂອງງົບປະມານການລົງທຶນປົກກະຕິຂອງລັດ ໃນແຕ່ລະປີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ;

2. ຄ່າທຳນຽມ ແລະ ຄ່າບໍລິການວິຊາການ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;

3. ການປະກອບສ່ວນ, ການສະໜັບສະໜູນທຶນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

4. ດອກເບ້ຍເງິນຝາກ ຫຼື ເງິນປັນຜົນທີ່ເກີດຈາກກອງທຶນ ຕາມການເຫັນດີຂອງກະຊວງການເງິນ;

5. ລາຍຮັບອື່ນທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 7 ເປົ້າໝາຍການນຳໃຊ້ກອງທຶນ**

ເປົ້າໝາຍການນຳໃຊ້ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ມີ ດັ່ງນີ້:

1. ຄົ້ນຄວ້າ ນຳໃຊ້ຜົນສຳເລັດດ້ານ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ພາຍໃນ ແລະ ຕ່າງປະເທດ ໄດ້ຄົ້ນຄວ້າມາແລ້ວ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ;

2. ຄົ້ນຄວ້າ ວິທະຍາສາດ ພື້ນຖານ ແລະ ຄົ້ນຄວ້າວິທະຍາສາດນຳໃຊ້ ຂອງບັນດານັກຄົ້ນຄວ້າ, ສູນຄົ້ນຄວ້າ ຫຼື ສະຖາບັນຄົ້ນຄວ້າ ເພື່ອຜະລິດເປັນສິນຄ້າ ແລະ ການບໍລິການ;

3. ຄົ້ນຄວ້າ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ຂອງບັນດາສູນ ຫຼື ສະຖາບັນ ຄົ້ນຄວ້າກະສິກຳ ເພື່ອຮັບໃຊ້ ແລະ ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ເປັນຕົ້ນ ການຄົ້ນຄວ້າແນວພັນ ເຂົ້າ, ສັດ, ພືດ, ຕົ້ນໄມ້;

4. ຄົ້ນຄວ້າ ປະດິດສ້າງເຄື່ອງມືການຜະລິດ ແລະ ວິທີການຜະລິດ ທີ່ທັນສະໄໝ ແລະ ມີປະສິດທິພາບສູງ;

5. ຄົ້ນຄວ້າ ການປັບປຸງຄຸນນະພາບຂອງນ້ຳ ແລະ ດິນ ເພື່ອຮັບໃຊ້ການຜະລິດ ລວມທັງການຄົ້ນຄວ້າ ຢາປາບສັດຕູພືດ ແລະ ຢາຂ້າແມງໄມ້;

6. ຄົ້ນຄວ້າ ຢາປົວພະຍາດ, ຜະລິດຕະພັນພືດ ແລະ ຜະລິດຕະພັນອື່ນ ທີ່ນຳໃຊ້ວັດສະດຸຈາກທຳມະຊາດ;

7. ສົມທົບທຶນໃນການຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພວມຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ;

8. ຄົ້ນຄວ້າ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳອື່ນ ຕາມການພິຈາລະນາ ແລະ ຮັບຮອງຂອງສະພາວິທະຍາສາດແຫ່ງຊາດ;

9. ການຕິດຕາມ ກວດກາ, ການປະເມີນຜົນ ໂຄງການຄົ້ນຄວ້າ ແລະ ການເຄື່ອນໄຫວວຽກງານກອງທຶນ;

10. ສົ່ງເສີມ ນັກຮຽນ ແລະ ນັກສຶກສາ ທີ່ມີພອນສະຫວັນໃນການຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ;

11. ອຸດໜູນແຮງງານ ສຳລັບເຮັດການຄົ້ນຄວ້າຂອງນັກຄົ້ນຄວ້າ ແລະ ໃຫ້ບຳເນັດ, ລາງວັນ, ຍ້ອງຍໍຜູ້ທີ່ມີຜົນສຳເລັດ ໃນການຄົ້ນຄວ້າ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໂດຍຜ່ານການຢັ້ງຢືນຈາກສະພາວິທະຍາສາດ ແຫ່ງຊາດ;

12. ສະໜັບສະໜູນ ກິດຈະກຳການເຄື່ອນໄຫວວຽກງານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ຂອງນັກຄົ້ນຄວ້າ, ສູນ ຫຼື ສະຖາບັນ ຄົ້ນຄວ້າ ເປັນຕົ້ນ ການພິມຜົນງານການຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ລົງໃນວາລະສານວິທະຍາສາດ, ການຈົດທະບຽນຊັບສິນທາງປັນຍາ, ການຈັດສຳມະນາ ແລະ ປະຊຸມແລກປ່ຽນຜົນງານການຄົ້ນຄວ້າວິທະຍາສາດ.

**ມາດຕາ 8 ບັນຊີເງິນຝາກຂອງກອງທຶນ**

ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ເປີດບັນຊີເງິນຝາກຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດຂອງລັດ ຕາມການເຫັນດີຂອງກະຊວງການເງິນ.

**ມາດຕາ 9 ບັນຊີຄຸ້ມຄອງໂຄງການຄົ້ນຄວ້າ**

ໂຄງການຄົ້ນຄວ້າທີ່ນຳໃຊ້ກອງທຶນ ຕ້ອງເປີດບັນຊີເງິນຝາກໂຄງການຄົ້ນຄວ້າ ຢູ່ທະນາຄານທຸລະກິດຂອງລັດ ໃນໄລຍະປະຕິບັດໂຄງການ ຕາມການເຫັນດີ ຂອງສະພາບໍລິຫານກອງທຶນ.

ທຸລະກຳການເງິນຂອງໂຄງການທີ່ນຳໃຊ້ກອງທຶນນັ້ນ ຕ້ອງຜ່ານລະບົບບັນຊີເງິນຝາກດັ່ງກ່າວ ພາຍໃຕ້ການກວດກາຂອງສະພາບໍລິຫານກອງທຶນ ແລະ ກະຊວງການເງິນ ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບງົບປະມານແຫ່ງລັດ.

**ມາດຕາ 10 ການຖອນເງິນກອງທຶນ**

ການຖອນເງິນຈາກບັນຊີເງິນຝາກ ຂອງກອງທຶນ ຕ້ອງປະຕິບັດຕາມ ແຜນການ, ແຜນງານ ແລະ ໂຄງການ ທີ່ໄດ້ຖືກຮັບຮອງຈາກສະພາບໍລິຫານກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ໂດຍຖືກຕ້ອງຕາມລະບຽບການ ຂອງກອງທຶນ ແລະ ລະບຽບການ ຂອງກະຊວງການເງິນ.

**ມາດຕາ 11 ການຂໍອະນຸຍາດນຳໃຊ້ເງິນກອງທຶນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ມີຈຸດປະສົງຂໍນຳໃຊ້ເງິນກອງທຶນ ເພື່ອຮັບໃຊ້ວຽກງານການຄົ້ນຄວ້າ ວິທະຍາສາດ, ພັດທະນາ ເຕັກໂນໂລຊີ ແລະ ນະວັດຕະກຳ, ການຖ່າຍທອດເຕັກໂນໂລຊີ ແລະ ການບໍລິການ ວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງປະຕິບັດຕາມລະບຽບການ ແລະ ບົດແນະນຳການນຳໃຊ້ກອງທຶນ ຂອງສະພາບໍລິຫານກອງທຶນ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ

**ມາດຕາ 12 ການຄຸ້ມຄອງກອງທຶນ**

ການເຄື່ອນໄຫວວຽກງານຂອງກອງທຶນ ຕ້ອງໄດ້ດຳເນີນການ ພາຍໃຕ້ລະບຽບການ ຂອງສະພາບໍລິຫານກອງທຶນ ແລະ ລະບຽບການທີ່ກ່ຽວຂ້ອງກັບກອງທຶນຂອງລັດ, ສະພາບໍລິຫານ ແລະ ກອງເລຂາກອງທຶນ ເປັນຜູ້ຄຸ້ມຄອງບໍລິຫານກອງທຶນ.

**ມາດຕາ 13 ສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ ຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕາມການສະເໜີ ຂອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ. ຄະນະສະພາບໍລິຫານກອງທຶນ ມີອາຍຸການ ຫ້າປີ ແລະ ສາມາດສະເໜີແຕ່ງຕັ້ງຄືນໃໝ່ໄດ້ຕື່ມອີກ ຫ້າປີ.

**ມາດຕາ 14 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນ ປະກອບມີ ດັ່ງນີ້:

1. ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
3. ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ ແລະ ເປັນຜູ້ປະຈຳການ;
4. ຮອງປະທານສະພາວິທະຍາສາດ ແຫ່ງຊາດ ເປັນກຳມະການ;
5. ຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດ-ສັງຄົມ ແຫ່ງຊາດ ເປັນກຳມະການ;
6. ຮອງອະທິການບໍດີ ມະຫາວິທະຍາໄລ ແຫ່ງຊາດ ເປັນກຳມະການ;
7. ຫົວໜ້າສະຖາບັນຄົ້ນຄວ້າ ວິທະຍາສາດ ແລະ ນະວັດຕະກຳ, ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
8. ຫົວໜ້າສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ກະຊວງສາທາລະນະສຸກ ເປັນກຳມະການ;
9. ຫົວໜ້າສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
10. ຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເປັນກຳມະການ;
11. ຫົວໜ້າຫ້ອງການສະພາວິທະຍາສາດ ແຫ່ງຊາດ ເປັນກຳມະການ.

ໃນກໍລະນີ ທີ່ສະມາຊິກສະພາບໍລິຫານກອງທຶນ ທ່ານໃດໜຶ່ງ ຫາກຖືກຍົກຍ້າຍໄປປະຕິບັດໜ້າທີ່ອື່ນ ຫຼື ບໍ່ສາມາດປະຕິບັດໜ້າທີ່ຂອງຕົນໄດ້ນັ້ນ ໃຫ້ແຕ່ງຕັ້ງຜູ້ໃໝ່ແທນ.

ສະພາບໍລິຫານກອງທຶນ ມີກອງເລຂາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງດຳລັດ ສະບັບນີ້.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ພິຈາລະນາຮັບຮອງແຜນການ, ແຜນງານ, ໂຄງການຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ, ນະວັດຕະກຳ ແລະ ງົບປະມານ ການເຄື່ອນໄຫວວຽກງານຂອງກອງທຶນ;
3. ອອກລະບຽບການ, ຄຳແນະນຳ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ, ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ;
4. ຮຽກປະຊຸມສະໄໝສາມັນ ແລະ ວິສາມັນ ຂອງສະພາບໍລິຫານກອງທຶນ;

5. ແຕ່ງຕັ້ງກອງເລຂາກອງທຶນ ແລະ ພະນັກງານຊ່ວຍວຽກ; ຊີ້ນໍາ, ຕິດຕາມ ກວດກາ ແລະ ປະເມີນຜົນ ການປະຕິບັດວຽກງານຂອງກອງເລຂາກອງທຶນ;

6. ແຕ່ງຕັ້ງຄະນະວິຊາການດ້ານຕ່າງໆ ເພື່ອປະຕິບັດໜ້າທີ່ໃນວຽກງານຂອງກອງທຶນ;

7. ລະດົມແຫຼ່ງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບໃຫ້ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ເຕີບໃຫຍ່ຂະຫຍາຍຕົວ;

8. ຕິດຕາມ ກວດກາ, ກວດສອບ, ຄຸ້ມຄອງການເຄື່ອນໄຫວ ແລະ ນໍາໃຊ້ກອງທຶນ ໃນການບໍລິຫານຈັດການ ໃຫ້ຖືກຕ້ອງກັບແຜນການ ແລະ ສອດຄ່ອງກັບເປົ້າໝາຍນໍາໃຊ້, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

9. ຄຸ້ມຄອງ, ກວດກາ ແລະ ສະຫຼຸບລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນໃຫ້ລັດຖະບານ ຢ່າງໜ້ອຍ ປີລະສອງຄັ້ງ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ກອງປະຊຸມສະພາບໍລິຫານກອງທຶນ**

ກອງປະຊຸມສະໄໝສາມັນຂອງສະພາບໍລິຫານກອງທຶນ ຈັດຂຶ້ນປີລະ ສອງຄັ້ງ. ໃນກໍລະນີມີບັນຫາສໍາຄັນ ທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີ ຂອງສະມາຊິກສະພາບໍລິຫານ ແຕ່ ສາມຄົນຂຶ້ນໄປ. ກອງປະຊຸມຈະເປີດໄດ້ ກໍຕໍ່ເມື່ອມີສະມາຊິກຂອງສະພາບໍລິຫານເຂົ້າຮ່ວມ ຢ່າງໜ້ອຍ ສອງສ່ວນສາມຂອງຈໍານວນສະມາຊິກສະພາບໍລິຫານກອງທຶນທັງໝົດ.

**ມາດຕາ 17 ງົບປະມານການເຄື່ອນໄຫວຂອງສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນ ສາມາດນໍາໃຊ້ງົບປະມານເຄື່ອນໄຫວວຽກງານຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຄຸ້ມຄອງ ແລະ ນໍາໃຊ້ ກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ສອດຄ່ອງກັບກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ.

**ມາດຕາ 18 ກອງເລຂາກອງທຶນ**

ກອງເລຂາກອງທຶນ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການຊ່ວຍວຽກຈໍານວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງໂດຍປະທານສະພາບໍລິຫານກອງທຶນ ຕາມການສະເໜີຂອງສະພາບໍລິຫານກອງທຶນ.

ຫົວໜ້າ ແລະ ຮອງຫົວໜ້າ ກອງເລຂາ ມີຕໍາແໜ່ງບໍລິຫານ ດັ່ງນີ້:

1. ຫົວໜ້າກອງເລຂາກອງທຶນ ທຽບເທົ່າຕໍາແໜ່ງບໍລິຫານ ປະເພດ 2;
2. ຮອງຫົວໜ້າກອງເລຂາກອງທຶນ ທຽບເທົ່າຕໍາແໜ່ງບໍລິຫານ ປະເພດ 3.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງກອງເລຂາກອງທຶນ**

ກອງເລຂາກອງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ສະພາບໍລິຫານກອງທຶນ ໃນການຄຸ້ມຄອງບໍລິຫານການເຄື່ອນໄຫວວຽກງານ ແລະ ບັນຊີ-ການເງິນ ຂອງກອງທຶນ;

2. ສ້າງ, ສັງລວມ ແລະ ນຳສະເໜີ ແຜນການເຄື່ອນໄຫວນຳໃຊ້ກອງທຶນ ຕໍ່ສະພາບໍລິຫານກອງທຶນ ເພື່ອພິຈາລະນາ ແລະ ຮັບຮອງ;

3. ຄົ້ນຄວ້າສ້າງລະບຽບການ, ຄຳແນະນຳ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ, ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ;

4. ສຶກສາ, ຄົ້ນຄວ້າ ວິທີການ ແລະ ຮູບແບບ ໃນການລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ;

5. ໂຄສະນາເຜີຍແຜ່ ກ່ຽວກັບຄວາມໝາຍ, ຄວາມສຳຄັນ ແລະ ພາລະບົດບາດ ຂອງກອງທຶນ;

6. ຕິດຕາມ ກວດກາ ແລະ ປະເມີນຜົນ ການນຳໃຊ້ກອງທຶນຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;

7. ປະສານສົມທົບ ແລະ ຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕາມການຊີ້ນຳຂອງສະພາບໍລິຫານກອງທຶນ;

8. ພົວພັນຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງສະພາບໍລິຫານກອງທຶນ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງກອງທຶນ ໃນແຕ່ລະໄລຍະ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານກອງທຶນ.

**ມາດຕາ 20 ຄະນະກຳມະການວິຊາການ**

ຄະນະກຳມະການວິຊາການ ມີລາຍລະອຽດ ລຸ່ມນີ້:

1. ຄະນະກຳມະການວິຊາການ ແມ່ນບັນດານັກວິທະຍາສາດ, ນັກບໍລິຫານທີ່ມີລະດັບວິຊາສະເພາະດ້ານໃນລະດັບປະລິນຍາເອກ, ມີຄວາມຮູ້, ຄວາມສາມາດ, ໜ້າເຊື່ອຖື ແລະ ຖືກຍອມຮັບຂອງບັນດານັກວິທະຍາສາດ ແລະ ນັກບໍລິຫານ ໃນຂົງເຂດວິຊາສະເພາະດຽວກັນ;

2. ງົບປະມານເຄື່ອນໄຫວຂອງ ຄະນະກຳມະການວິຊາການ ແມ່ນນຳໃຊ້ງົບປະມານການເຄື່ອນໄຫວວຽກງານກອງທຶນ.

**ມາດຕາ 21 ສິດ ແລະ ໜ້າທີ່**

ສິດ ແລະ ໜ້າທີ່ ຂອງຄະນະກຳມະການວິຊາການ ມີດັ່ງນີ້

1. ເຄື່ອນໄຫວວຽກງານຂອງຕົນ ຕາມຫຼັກການລວມສູນປະຊາທິປະໄຕ, ພາວະວິໄສ, ຊື່ສັດ, ປະຕິບັດຕາມລະບຽບກົດໝາຍ ແລະ ມີຈັນຍາບັນຕໍ່ວິຊາຊີບສູງ;

2. ຕີລາຄາ ແລະ ປະເມີນຜົນເບື້ອງຕົ້ນ ໃນການຄັດເລືອກ ຫົວຂໍ້ໂຄງການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ກອງທຶນຈະໃຫ້ການສະໜັບສະໜູນ;

3. ປະເມີນຜົນ, ກວດກາ, ມອບຜົນການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ ກອງທຶນໃຫ້ການສະໜັບສະໜູນ;

4. ເປັນທີ່ປຶກສາໃນການກຳນົດທິດທາງການຄົ້ນຄວ້າ ແລະ ບັນດາບັນຫາທີ່ກ່ຽວຂ້ອງອື່ນໆ ໃຫ້ແກ່ສະພາບໍລິຫານກອງທຶນ.

## ໝວດທີ 4
## ການກວດສອບ ແລະ ລະບອບການລາຍງານ

**ມາດຕາ 22 ການກວດສອບບັນຊີ**

ບັນຊີຂອງກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງໄດ້ຮັບການກວດສອບ ຕາມລະບຽບການ ກ່ຽວກັບການກວດສອບບັນຊີຂອງລັດ ຊຶ່ງດຳເນີນການໂດຍ ອົງການຄຸ້ມຄອງວຽກງານວິທະຍາສາດ ແລະ ເຕັກໂນໂລຊີ, ອົງການກວດສອບແຫ່ງລັດ ຫຼື ອົງການກວດກາທີ່ໄດ້ຮັບມອບໝາຍ. ການກວດສອບບັນຊີກອງທຶນ ປະກອບມີ ສອງ ປະເພດ ຊຶ່ງປະກອບດ້ວຍ ການກວດກາປົກກະຕິ ແລະ ການກວດກາສະເພາະກິດ.

**ມາດຕາ 23 ການກວດກາປົກກະຕິ**

ເພື່ອເຮັດໃຫ້ການນຳໃຊ້ກອງທຶນຖືກຕ້ອງຕາມ ເປົ້າໝາຍ, ແຜນດຳເນີນງານ, ກົດໝາຍ ແລະ ລະບຽບການ, ສະພາບໍລິຫານກອງທຶນ ຕ້ອງດຳເນີນການກວດກາການນຳໃຊ້ກອງທຶນ ຢ່າງເປັນປົກກະຕິ ແລະ ມີກຳນົດເວລາທີ່ແນ່ນອນ.

**ມາດຕາ 24 ການກວດກາສະເພາະກິດ**

ໃນກໍລະນີຈຳເປັນ ລັດຖະບານ ສາມາດດຳເນີນການກວດກາ ການເຄື່ອນໄຫວຮອບດ້ານຂອງກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ທຸກເວລາ.

**ມາດຕາ 25 ການລາຍງານ**

ກອງເລຂາກອງທຶນ ຂອງສະພາບໍລິຫານ ຕ້ອງສົ່ງບົດລາຍງານ ປະຈຳຫົກເດືອນ ແລະ ໜຶ່ງປີ ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານຂອງຕົນ ແລະ ບົດລາຍງານຂອງອົງການກວດສອບແຫ່ງລັດ ໃຫ້ແກ່ສະພາບໍລິຫານກອງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ຕາມລະບຽບການຂອງສະພາບໍລິຫານກອງທຶນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 26 ເຄື່ອງໝາຍ ແລະ ຕາປະທັບ**

ສະພາບໍລິຫານກອງທຶນພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ມີເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ພ້ອມທັງລາຍງານການເຄື່ອນໄຫວວຽກງານຂອງກອງທຶນໃຫ້ລັດຖະບານ ໜຶ່ງຄັ້ງຕໍ່ປີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 572/ລບ, ລົງວັນທີ 20 ກັນຍາ 2021.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນາຍົກລັດຖະມົນຕີ

**ພັນຄຳ ວິພາວັນ**